# ການປັບປຸງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປີ 2016

**ນຳສະເໜີໂດຍ:** ທ່ານ ສຸລິຍາ ປອງປະດິດ

ຮອງຫົວໜ້າກົມສົ່ງເສີມການລົງທຶນ

# ຫົວຂໍ້ສະເໜີ

1. ເຫດຜົນ ແລະ ຄວາມຈໍາເປັນໃນການປັບປຸງກົດໝາຍ
2. ເນື້ອໃນຕົ້ນຕໍທີ່ມີການປັບປຸງ

# 1. ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ

## ການປັບປຸງກົດໝາຍໄລຍະຜ່ານມາ




1989




1994




2004




2009




2016

# ການອະນຸມັດລົງທຶນ ໄລຍະ 2016-ປະຈຸບັນ (ແຍກຕາມຂະແໜງການ)



# 10 ອັນດັບປະເທດທີ່ລົງທຶນຫຼາຍກວ່າໝູ່, ໄລຍະ 2016-ປະຈຸບັນ

| ລ/ດ | ປະເທດ | ມູນຄ່າການລົງທຶນ |
|---|---|---|
| 1 | ລາວ | 10,814,454,990 |
| 2 | ຈີນ | 9,299,526,134 |
| 3 | ໄທ | 1,907,980,649 |
| 4 | ຝະລັ່ງ | 453,112,458 |
| 5 | ຫວຽດນາມ | 407,839,018 |
| 6 | ເນເທີແລນ | 390,600,000 |
| 7 | ສິງກະໂປ | 229,984,759 |
| 8 | ສະວີເດັນ | 75,250,000 |
| 9 | ອີດສະຕາລີ | 67,009,770 |
| 10 | ອັງກິດ | 42,000,000 |

# 1. ເຫດຜົນ ແລະ ຄວາມຈຳເປັນໃນການປັບປຸງກົດໝາຍ

- **ຄຽງຄູ່ກັບຜົນສຳເລັດ, ການຈັດຕັ້ງປະຕິບັດກົດໝາຍສົ່ງເສີມການລົງທຶນກໍປະເຊີນກັບສິ່ງທ້າທາຍ ແລະ ຂໍ້ຫຍຸ້ງຍາກຫຼາຍດ້ານເປັນຕົ້ນ:**

1) ຂະແໜງການດ້ານເສດຖະກິດ ໄດ້ມີການຂະຫຍາຍຕົວ ແລະ ປ່ຽນແປງຫຼາຍສົມຄວນ ເຮັດໃຫ້ບາງຂະແໜງ ການສົ່ງເສີມທີ່ໄດ້ກຳນົດໃນເວລານັ້ນບໍ່ສອດຄ່ອງ;
2) ບັນດາປະເທດໃນພາກພື້ນ ໄດ້ເພີ່ມທະວີການແຂ່ງຂັນທີ່ຫຼາຍຂຶ້ນ ເພື່ອດຶງດູດເອົາການລົງທຶນຂອງຕ່າງປະເທດ;
3) ລັດຖະບານ ໄດ້ຍຸດຕິກົນໄກກອງປະຊຸມ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ທ້ອງຖິ່ນ ເຮັດໃຫ້ກົນໄກການຄົ້ນຄວ້າພິຈາລະນາອະນຸມັດການລົງທຶນ ບໍ່ສອດຄ່ອງກັບບາງມາດຕາຂອງກົດໝາຍ;
4) ລັດຖະບານ ມີນະໂຍບາຍຢາກພັດທະນານິຄົມອຸດສາຫະກຳ ແລະ ເຂດເສດຖະກິດປະເພດຕ່າງໆທີ່ມີລັກສະ ນະສະເພາະ ແລະ ແຕກຕ່າງຈາກເຂດເສດຖະກິດພິເສດ ເພື່ອຊຸກຍູ້ການພັດທະນາໃນບາງຂະແໜງການຈຸດສຸມ ເພື່ອຍູ້ແຮງການເຕີບໂຕຂອງເສດຖະກິດ;

5) ໂຄງການລົງທຶນຈຳນວນໜຶ່ງ ຍັງບໍ່ເອົາໃຈໃສ່ໃນການປະຕິບັດຕາມພັນທະທີ່ກຳນົດໃນສັນຍາ, ຍັງມີຜົນກະທົບດ້ານສັງຄົມ ແລະ ສິ່ງແວດລ້ອມ, ບາງໂຄງການກໍ່ມີລັກສະນະແກ່ຍາວ ແລະ ການຕິດຕາມກວດກາໂຄງການຍັງເຮັດບໍ່ທັນໄດ້ດີ ແລະ ໃນບາງກໍລະນີການອອກມາດຕະການແກ້ໄຂຍັງມີລັກສະນະສັກຊ້າ;

6) ການຄົ້ນຄວ້າ ຕໍ່ການປ່ຽນແປງການລົງທຶນຂອງກິດຈະການຄວບຄຸມ ຍັງມີທາງສຽງວ່າຍັງມີຄວາມຫຍຸ້ງຍາກ ແລະ ໃຊ້ເວລາ;

7) ການຄຸ້ມຄອງ ແລະ ການໃຫ້ນະໂຍບາຍກັບບາງເຂດເສດຖະກິດພິເສດ ເຮັດບໍ່ໄດ້ດີເທົ່າທີ່ຄວນ;

8) ການຄົ້ນຄວ້າຄັດເລືອກຜູ້ລົງທຶນໃນກິດຈະການສຳປະທານຈຳນວນໜຶ່ງ ຍັງບໍ່ໄດ້ຄຸນນະພາບ, ຍັງບໍ່ສາມາດເລືອກເຟັ້ນເອົານັກລົງທຶນທີ່ມີຄວາມພ້ອມມາພັດທະນາຊັບພະຍາກອນທຳຊາດຂອງຊາດໃຫ້ມີປະສິດທິຜົນສູງສຸດ;

9) ການຈັດຕັ້ງປະຕິບັດໂຄງການລົງທຶນສຳປະທານຂະໜາດໃຫຍ່ ໂດຍສະເພາະໂຄງການດ້ານພະລັງງານ ບໍ່ສາມາດຈັດຕັ້ງປະຕິບັດເງື່ອນໄຂການປະກອບທຶນຈົດທະບຽນຕາມກົດໝາຍ ເຮັດໃຫ້ຕ້ອງໄດ້ຂໍຍົກເວັ້ນການຈັດຕັ້ງປະຕິບັດມາດຕາທີ່ກ່ຽວຂ້ອງຈາກສະພາແຫ່ງຊາດ ເປັນປະຈຳ;

# 2. ເນື້ອໃນຕົ້ນຕໍທີ່ມີການປັບປຸງ

- ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ ສະບັບປະຈຸບັນປະກອບມີ 13 ພາກ, 16 ໝວດ ແລະ 109 ມາດຕາ;
- ສ່ວນສະບັບປັບປຸງໃນຄັ້ງນີ້ ປະກອບດ້ວຍ 12 ພາກ 28 ໝວດ ແລະ 101 ມາດຕາ;
- ໃນນັ້ນ ມາດຕາທີ່ມີການປັບປຸງຕົ້ນຕໍ 56 ມາດຕາ, ເພີ່ມໃໝ່ 5 ມາດຕາ ແລະ ໄດ້ຕັດອອກ 10 ມາດຕາ ຄື: ພາກທີ X ການແກ້ໄຂຂໍ້ຂັດແຍ່ງ ຈໍານວນ 5 ມາດຕາ ແລະ ໝວດທີ 1 ຂອງພາກທີ VII ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຈໍານວນ 5 ມາດຕາ.

## ເນື້ອໃນຕົ້ນຕໍໃນການປັບປຸງ ມີດັ່ງນີ້:

1. ປັບປຸງການໃຫ້ນະໂຍບາຍສົ່ງເສີມການລົງທຶນໃຫ້ຈະແຈ້ງ, ຮັດກຸມ ແລະ ສອດຄ່ອງກັບກົດໝາຍຂອງຂະແໜງການກ່ຽວຂ້ອງ:

- ນະໂຍບາຍສົ່ງເສີມກິດຈະການຕາມຂະແໜງການ (ມາດຕາ 9)
- ນະໂຍບາຍດ້ານອາກອນກຳໄລ (ມາດຕາ 11)
- ນະໂຍບາຍດ້ານ ພາສີ ແລະ ອາກອນມູນຄ່າເພີ່ມ (ມາດຕາ 12)

# - ການກຳນົດໃຫ້ນະໂຍບາຍສົ່ງເສີມຕາມຜົນການປະກອບການຂອງວິສາຫະກິດ (Performance base)

ໂດຍໄດ້ກຳນົດເງື່ອນໄຂເຊັ່ນ: ນຳເຂົ້າທຶນຕາມກົດໝາຍກຳນົດ, ປະຕິບັດພັນທະຕາມສັນຍາ ແລະ ເສຍພັນທະດ້ານອາກອນຢ່າງຄົບຖ້ວນ, ມີກິດຈະກຳຊ່ວຍເຫຼືອທາງສັງຄົມ-ສິ່ງແວດລ້ອມ (CSR), ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ, ມີການຈ້າງແຮງງານລາວ ແລະ ມີການຝຶກອົບຮົມ, ຕ້ອງຂຶ້ນທະບຽນປະກັນສັງຄົມ ແລະ ຈ່າຍເງິນສົມທົບປະກັນສັງຄົມ, ມີໂຕ່ງໂສ້ງການຜະລິດພາຍໃນ, ແລະ ອື່ນໆ.

2. ປັບປຸງກົນໄກໃນການພິຈາລະນາອະນຸມັດການລົງທຶນ;

3. ເພີ່ມເງື່ອນໄຂທີ່ເຂັ້ມງວດຂຶ້ນ ກ່ຽວກັບການໂອນສິດນຳໃຊ້ທີ່ດິນ;

4.ປັບປຸງເນື້ອໃນການຄັດເລືອກຜູ້ລົງທຶນໃນກິດຈະການສຳປະທານ ໃຫ້ມີລັກສະນະແຂ່ງຂັນຫຼາຍຂຶ້ນ;

5. ເພີ່ມນະໂຍບາຍດ້ານອາກອນກຳໄລ ສຳລັບຜູ້ພັດທະນາເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

6. ປັບປຸງກົນໄກການຄົ້ນຄວ້າພິຈາລະນາຕໍ່ ການສະເໜີ ປ່ຽນແປງຈຸດປະສົງໃນການດຳເນີນທຸລະກິດ, ຜູ້ຖືຮຸ້ນ, ທຶນຈົດທະບຽນ ແລະ ອື່ນໆ ຂອງຜູ້ລົງທຶນໃນກິດຈະການບັນຊີຄວບຄຸມ.

7. ປັບປຸງເນື້ອໃນກ່ຽວກັບການຄັດເລືອກຜູ້ລົງທຶນໃນກິດຈະການສຳປະທານ ໃຫ້ມີລັກສະນະແຂ່ງຂັນຂຶ້ນ.

8. ໄດ້ປັບປຸງກ່ຽວກັບການນຳເຂົ້າທຶນໃນກິດຈະການທົ່ວໄປ ເຊິ່ງ ຜູ້ລົງທຶນຕ່າງປະເທດທີ່ລົງທຶນໃນກິດຈະການທົ່ວໄປ ຕ້ອງນຳທຶນເຂົ້າມາຢ່າງໜ້ອຍ 30 % ຂອງທຶນຈົດທະບຽນ ພາຍໃນເວລາ 90 ວັນ.

9. ໄດ້ປັບປຸງການກຳນົດທຶນຈົດທະບຽນ ເປັນຮູບແບບຂັ້ນໄດ ຕາມມູນຄ່າການລົງທຶນ ແລະ ປັບປຸງຂະໜາດມູນຄ່າການລົງທຶນ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃນການນຳເຂົ້າທຶນຈົດທະບຽນ.

10. ຕໍ່ການນຳເຂົ້າແຮງງານທີ່ເກີນໂກຕ້າທີ່ກົດໝາຍກຳນົດ (ໃນມາດຕາ 70) ໄດ້ປັບປຸງ ໃຫ້ສະເໜີຫາກະຊວງແຮງງານ ສະຫວັດດີການ ແລະ ສັງຄົມ ພິຈາລະນາ ໂດຍການປະສານສົມທົບກັບຂະແໜງ ການທີ່ກ່ຽວຂ້ອງ.

# ຂໍຂອບໃຈ